# ຄລີນິກໃຫ້ບໍລິການສັກຢາປ້ອງກັນໄຂ້ຫວັດໃຫຍ່ແກ່ນັກຮຽນຂອງໂຮງຮຽນ Lowell Public Schools

ເຄືອຈັກກະພິບແຫ່ງລັດ Massachusetts ໄດ້ອອກຄຳສັ່ງໃຫ້ **ນັກຮຽນທຸກຄົນທີ່ເຂົ້າຮຽນໃນລະດັບຊັ້ນຮຽນ PreK-12 ແມ່ນຈະຕ້ອງໄດ້ຮັບການສັກຢາປ້ອງກັນໄຂ້ຫວັດໃຫຍ່ກ່ອນວັນທີ 31 ທັນວາ 2020.** ເຊິ່ງລວມໄປເຖິງນັກຮຽນທີ່ລົງທະບຽນຮຽນທັງພາຍໃນຫ້ອງຮຽນ ແລະ ຮຽນຜ່ານຮູບແບບທາງໄກ. ໂດຍຈະຕ້ອງໄດ້ຍື່ນຫຼັກຖານການສັກຢາປ້ອງກັນໄຂ້ຫວັດໃຫຍ່ໃຫ້ແກ່ພະຍາບານປະຈຳໂຮງຮຽນກ່ອນວັນທີ 12/31/20 ຕາມທີ່ກຳນົດໃຫ້, ຖ້າບໍ່ດັ່ງນັ້ນນັກຮຽນຈະຖືກຄັດອອກຈາກການເຂົ້າຮຽນ.

ເພື່ອໃຫ້ການຊ່ວຍເຫຼືອແກ່ຄອບຄົວຂອງນັກຮຽນພວກເຮົາ, ໂຮງຮຽນ Lowell Public Schools ໄດ້ຮ່ວມມືກັບ CVS Pharmacy (ຮ້ານຂາຍຢາ CVS) ເພື່ອຈັດຫາຄລີນິກໃຫ້ບໍລິການສັກຢາປ້ອງກັນໄຂ້ຫວັດໃຫຍ່ຢູ່ທີ່ໂຮງຮຽນຂອງພວກເຮົາ. ເຊິ່ງຄລີນິກດັ່ງກ່າວຈະໃຫ້ບໍລິການແກ່ເດັກນ້ອຍອາຍຸ 3 ປີຂຶ້ນໄປ (ບັນດາສະມາຊິກໃນຄອບຄົວ ແລະ ເຈົ້າໜ້າທີ່ຂອງໂຮງຮຽນແມ່ນສາມາດເຂົ້າມາຮ່ວມນຳໄດ້!). ທ່ານສາມາດໄປທີ່ຄລີນິກແຫ່ງໃດກໍໄດ້ – ເຊິ່ງບໍ່ຈຳເປັນຕ້ອງເປັນຄລີນິກທີ່ຢູ່ໂຮງຮຽນຂອງທ່ານ.

ໂດຍມີຄວາມຈຳເປັນທີ່ຈະຕ້ອງໄດ້ລົງທະບຽນກ່ອນລ່ວງໜ້າ ແລະ ບ່ອນວ່າງກໍມີຈຳນວນຈຳກັດ. ສຳລັບຂໍ້ມູນເພີ່ມເຕີມ ແລະ ລິ້ງໃນການລົງທະບຽນຂອງຄລີນິກແຕ່ລະແຫ່ງ, ສາມາດເຂົ້າໄປເບິ່ງໄດ້ທີ່: www.lowell.k12.ma.us/flushotclinic.

ກະລຸນາຢ່າລືມປະຕິບັດຕາມລະບຽບການຮັກສາໄລຍະຫ່າງທາງສັງຄົມ ແລະ ໃສ່ໜ້າກາກ ຫຼື ສິ່ງປົກຫຸ້ມໃບໜ້າ. ພ້ອມນັ້ນກໍຢ່າລືມຖືບັດປະກັນສຸຂະພາບຂອງທ່ານມານຳ.




## ວັນທີ/ສະຖານທີ່ການໃຫ້ບໍລິການຂອງຄລີນິກ

**ວັນເສົາທີ 5 ທັນວາ – 9 ໂມງເຊົ້າ - 1 ໂມງຕອນບ່າຍ**
- Washington (795 Wilder St.) - gym

**ວັນຈັນທີ 7 ທັນວາ – 3 ໂມງແລງ - 5:30 ໂມງແລງ**
- STEM Academy (43 Highland St.) - gym
- Lincoln (300 Chelmsford St.) - gym

**ວັນອັງຄານທີ 8 ທັນວາ – 3 ໂມງແລງ - 5:30 ໂມງແລງ**
- Murkland (350 Adams St.) - gym
- Pyne Arts (145 Boylston St.) - gym

**ວັນພຸດທີ 9 ທັນວາ – 3 ໂມງແລງ - 5:30 ໂມງແລງ**
- Shaughnessy (1158 Gorham St.) - cafe
- Morey (130 Pine St.) - cafe

**ວັນພະຫັດທີ 10 ທັນວາ – 3 ໂມງແລງ - 5:30 ໂມງແລງ**
- Greenhalge (149 Ennell St.) - cafe
- Reilly (115 Douglas Rd.) - cafe

**ວັນສຸກທີ 11 ທັນວາ – 3 ໂມງແລງ - 5:30 ໂມງແລງ**
- Butler (1140 Gorham St.) - cafe
- Wang (365 West Meadow Rd.) - gym

**ວັນເສົາທີ 12 ທັນວາ – 9 ໂມງເຊົ້າ - 1 ໂມງຕອນບ່າຍ**
- LHS (50 Fr. Morissette Blvd.) - cafe

**ວັນຈັນທີ 14 ທັນວາ – 3 ໂມງແລງ - 5:30 ໂມງແລງ**
- LHS (50 Fr. Morissette Blvd.) - cafe

**ວັນອັງຄານທີ 15 ທັນວາ – 3 ໂມງແລງ - 5:30 ໂມງແລງ**
- LHS (50 Fr. Morissette Blvd.) - cafe

*ສຳລັບຄຳຖາມໃດໆກໍຕາມ, ກະລຸນາສົ່ງອີເມວໄປທີ່ FluShotClinicsQuestions@CVSHealth.com, ຫຼື ຕິດຕໍ່ພະຍາບານປະຈຳໂຮງຮຽນຂອງທ່ານ.*